# ວິທີການສົ່ງເສີມຕາມຄວາມຕ້ອງການຂອງຊາວບ້ານ ບົນພື້ນຖານຄວາມຈຳເປັນໃນການຍົກລະດັບຄຸນນະພາບຊີວິດ

ໂດຍ: ທ່ານ ອຳພອນ ສຸວັນນະວົງສ໌



## I. ພາກສະເໜີ

ກຸນແຈສຳຄັນໃນການພັດທະນາຊຸມຊົນໃຫ້ມີຄວາມຍືນຍົງ ແມ່ນຈຳເປັນຕ້ອງມີອົງປະກອບໃນການພັດທະນາຫຼາຍຢ່າງ ໂດຍສະເພາະວິທີການສົ່ງເສີມໃຫ້ຊາວບ້ານໄດ້ມີສ່ວນຮ່ວມໃນຂະບວນການຕ່າງໆທຸກຂັ້ນຕອນ, ໃຫ້ເຂົາເຈົ້າຮູ້ສຶກມີຄວາມເປັນເຈົ້າຂອງກິດຈະກຳ ແລະສາມາດເພິ່ງພາຕົນເອງໄດ້ໃນຕໍ່ໜ້າ. ຈາກປະສົບການໃນການພັດທະນາຂອງຫຼາຍໆໂຄງການຜ່ານມາ ມັກຈະມີໃຫ້ເຫັນຢູ່ເປັນປະຈຳຄື ກິດຈະກຳຕ່າງໆຈະດຳເນີນໄປໄດ້ດີສະເພາະແຕ່ໃນໄລຍະທີ່ມີໂຄງການສະໜັບສະໜູນຢູ່ເທົ່ານັ້ນ, ພາຍຫຼັງທີ່ໂຄງການສິ້ນສຸດລົງກິດຈະກຳທັງໝົດກໍ່ຢຸດສະງັກ ບໍ່ສາມາດດຳເນີນຕໍ່ໄປໄດ້ ສາເຫດໜຶ່ງກໍ່ແມ່ນຍ້ອນມາຈາກການວາງແນວທາງໃນການສົ່ງເສີມຍັງບໍ່ຖືກກັບເປົ້າໝາຍ, ມີຂໍ້ມູນແບບລວມໆ ແລະຂາດການວິເຄາະຂໍ້ມູນແບບມີສ່ວນຮ່ວມກັບຊາວບ້ານ, ກິດຈະກຳທີ່ກຳໜົດໃນແຜນບໍ່ແມ່ນຄວາມຕ້ອງການຂອງຊາວບ້ານທີ່ແທ້ຈິງ ແລະຊາວບ້ານກໍ່ຄິດວ່າກິດຈະກຳທັງໝົດແມ່ນຂອງໂຄງການ.

ເພາະສະນັ້ນ, ວິທີການສົ່ງເສີມໃຫ້ຖືກຕ້ອງຕາມຄວາມຕ້ອງການ ແລະເຫັນວ່າມີຄວາມຈຳເປັນສຳລັບຊາວບ້ານ ກໍ່ເປັນວິທີໜຶ່ງ ທີ່ທາງທີມງານໄດ້ນຳມາຈັດຕັ້ງປະຕິບັດຮ່ວມກັບຊາວບ້ານ ຢູ່ໃນ 5 ບ້ານເປົ້າໝາຍຂອງໂຄງການ ຢູ່ໃນເມືອງຫົງສາຄື: ບ້ານໃໝ່, ບ້ານຈຳປາ, ບ້ານນາຊາຍຄຳ, ບ້ານນາໜອງຄຳ ແລະ ບ້ານນາໄມ້ຍົມ ເຊິ່ງແມ່ນກຸ່ມຊາວ ບ້ານທີ່ໄດ້ຮັບຜົນກະທົບ ຈາກການພັດທະນາໂຄງການໄຟຟ້າພະລັງງານຄວາມຮ້ອນ ຂອງບໍລິສັດໄຟຟ້າຫົງສາ ສະນັ້ນທາງລັດຖະບານ ແລະໂຄງການຕ້ອງໄດ້ສຸມໃສ່ໃນການຟື້ນຟູຊີວິດການເປັນຢູ່ ແລະພັດທະນາອາຊີບໃຫ້ເຂົາເຈົ້າ ໂດຍແນໃສ່ຄວາມຍືນຍົງໃນອານາຄົດ.

### 1.1. ເປົ້າໝາຍໃນການຈັດຕັ້ງປະຕິບັດ

- **ເປົ້າໝາຍລວມ**: ແມ່ນແນໃສ່ເພື່ອຟື້ນຟູຊີວິດການເປັນຢູ່ - ປັບປຸງ ແລະພັດທະນາອາຊີບ ທີ່ມີຄວາມ ເໝາະສົມ ແລະມີຄວາມຍືນຍົງ ໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ.

❖ **ເປົ້າໝາຍສະເພາະ**:

- ການສົ່ງເສີມກິດຈະກໍາຕ່າງໆແມ່ນແນໃສ່ຄວາມຕ້ອງການທີ່ແທ້ຈິງ ຂອງຊາວບ້ານ ໂດຍອີງໃສ່ທ່າແຮງຕ່າງໆທີ່ມີຢູ່ຂອງຊາວບ້ານ ແລະທ່າແຮງຈາກພາຍນອກ.
- ໃຫ້ຊາວບ້ານໄດ້ມີສ່ວນຮ່ວມໃນຂະບວນການທຸກຂັ້ນຕອນ ເພື່ອໃຫ້ເກີດມີຄວາມຍືນຍົງ

## 1.2. ຜົນໄດ້ຮັບ

ຜ່ານການຈັດຕັ້ງປະຕິບັດຕົວຈິງ ສາມາດປະສົບຜົນສໍາເລັດຄື:

- o ຊາວບ້ານທຸກຄອບຄົວມີສ່ວນຮ່ວມໃນການວາງແຜນພັດທະນາຄອບຄົວຂອງເຂົາເຈົ້າ, ຮ່ວມໃຫ້ຂໍ້ມູນ, ວິເຄາະຂໍ້ມູນ, ວາງແຜນ, ຈັດຕັ້ງປະຕິບັດ ແລະຕິດຕາມປະເມີນຜົນ.
- o ກິດຈະກໍາທັງໝົດແມ່ນຖືກກໍາໜົດໂດຍຊາວບ້ານ ອີງຕາມເງື່ອນໄຂຄວາມຕ້ອງການ ແລະຄວາມຈໍາເປັນຂອງແຕ່ລະຄອບຄົວ ເຊິ່ງເຫັນໄດ້ຈາກການມີກຸ່ມຜະລິດຕ່າງໆ ຢູ່ໃນບ້ານ ເຊັ່ນ: ກຸ່ມປູກຢາງພາຣາປະສົມປະສານ ກັບການປູກພືດລົ້ມລຸກ, ກຸ່ມປູກໄມ້ກິນໝາກສະຫຼັບກັບການປູກພືດລົ້ມລຸກ, ກຸ່ມລ້ຽງໝູ, ກຸ່ມລ້ຽງໄກ່, ກຸ່ມປູກເຫັດ, ກຸ່ມປູກພືດຜັກປອດສານເຄມີ, ກຸ່ມລ້ຽງງົວ, ກຸ່ມຜະລິດດິນບລ໊ອກ, ກຸ່ມຫັດຖະກໍາຕໍ່າຫູກ, ກຸ່ມບໍລິການເຊັ່ນ: ຮ້ານຂາຍອາຫານ, ຮ້ານເສີມຄວາມງາມ ແລະລວມທັງກຸ່ມພັດທະນາສີມືແຮງງານເຊັ່ນ: ຂັບລົດ, ຊ່າງໄມ້, ຊ່າງປູນ, ຊ່າງສ້ອມແປງ…
- o ຊາວບ້ານເປັນຜູ້ດໍາເນີນກິດຈະກໍາດ້ວຍຕົວເຂົາເຈົ້າເອງ ໂດຍມີໂຄງການ ແລະພາກສ່ວນທີ່ກ່ຽວຂ້ອງຈາກເມືອງ ຄອຍເປັນຜູ້ສະໜັບສະໜູນຢູ່ເບື້ອງຫຼັງ.
- o ວິທີການຄັດເລືອກກິດຈະກໍາທັງໝົດ ຂອງຊາວບ້ານແມ່ນໄດ້ອີງໃສ່ທ່າແຮງທີ່ມີຢູ່ໃນປະຈຸບັນ ໂດຍສະເພາະແມ່ນ ຜົນພອຍໄດ້ຈາກການພັດທະນາໂຄງການໄຟຟ້າທົ່ງສາ ເຊິ່ງໄດ້ນໍາເຂົ້າແຮງງານຈາກພາຍໃນ ແລະຕ່າງປະເທດເປັນຈໍານວນຫຼວງຫຼາຍ.



ການລ້ຽງກົບໃນກະຊັງ



ການລ້ຽງໄກ່ພັນເນື້ອ 3 ສາຍເລືອດ

# II. ວິທີການທີ່ໄດ້ຈັດຕັ້ງປະຕິບັດ

## 2.1. ເຄື່ອງມືທີ່ໄດ້ນໍາໃຊ້ເຂົ້າໃນການເຮັດວຽກພາກສະໜາມ.

- ການທົບທວນຂໍ້ມູນມືສອງ.
- ການປະເມີນສະຖານະພາບຊຸມຊົນແບບມີສ່ວນຮ່ວມ PRA
- ກວດສອບຂໍ້ມູນຄວາມຕ້ອງການຂອງຊາວບ້ານ ດ້ວຍວິທີການເຂົ້າເຖິງຊຸມຊົນ ແບບເຄາະປະຕູບ້ານ.
- ການວິເຄາະຂໍ້ມູນແບບມີສ່ວນຮ່ວມກັບແຕ່ລະຄອບຄົວ ດ້ວຍຮູບແບບ SWOT
- ການຈັດລຽງບູລິມະສິດຄວາມສຳຄັນຂອງກິດຈະກຳແບບມີສ່ວນຮ່ວມ ກັບແຕ່ລະຄອບຄົວ
- ການກຳໜົດແຜນແບບມີສ່ວນຮ່ວມກັບແຕ່ລະຄອບຄົວ

## 2.2. ພາລະບົດບາດ ແລະໜ້າທີ່ຂອງພາກສ່ວນຕ່າງໆ

ຄູ່ຮ່ວມງານທີ່ສຳຄັນ ໃນການສົ່ງເສີມປະກອບມີ.

- ຫ້ອງວ່າການປົກຄອງເມືອງຫົງສາ ເປັນໃຈກາງໃນການປະສານກັບແຕ່ລະພາກສ່ວນ
- ຫ້ອງການກະສິກຳ ແລະປ່າໄມ້ເມືອງຫົງສາ ມີບົດບາດໃນການ ສະໜັບສະໜູນທາງດ້ານວິຊາການກະສິກຳ (ປູກຝັງ, ລ້ຽງສັດ, ການປ່າໄມ້)
- ຫ້ອງການທີ່ດິນເມືອງມີບົດບາດໃນການຈັດຫາທີ່ດິນທຳການຜະລິດ ແລະຕິດຕາມການຄຸ້ມຄອງນຳໃຊ້ດິນ ແລະອອກໃບຕາດິນ.
- ຫ້ອງການ ການຄ້າເມືອງ ມີບົດບາດໃນການສະໜອງຂໍ້ມູນທາງດ້ານການຕະຫຼາດ, ການສ້າງເຄືອຂ່າຍຜູ້ຄ້າຕ່າງໆ.
- ອົງການຈັດຕັ້ງມະຫາຊົນ: ຫ້ອງການແມ່ຍິງ, ຊາວໜຸ່ມ, ກຳມະບານ ແລະແນວໂຮມ ມີບົດບາດເປັນຜູ້ອຳນວຍຄວາມສະດວກ ໃນການຈັດຕັ້ງກຸ່ມພັດທະນາອາຊີບ, ການເສີມສ້າງ ທາງດ້ານຄວາມອາດສາມາດຕ່າງໆໃຫ້ແກ່ກຸ່ມເປົ້າໝາຍ.
- ໜ່ວຍງານພັດທະນາຊຸມຊົນຂອງບໍລິສັດໄຟຟ້າຫົງສາ ມີບົດບາດເປັນຜູ້ອຳນວຍຄວາມສະດວກທາງດ້ານງົບປະມານ, ການຊອກຫາແຫຼ່ງຂໍ້ມູນຄວາມຮູ້ເທັກນິກອັນໃໝ່ ແລະສະໜອງວິຊາການພັດທະນາຊຸມຊົນພາກສະໜາມ.

## 2.3. ຂັ້ນຕອນໃນການດຳເນີນງານຕົວຈິງ.

- ລົມທົບກັບຫ້ອງການຕ່າງໆ ທີ່ກ່ຽວຂ້ອງຂອງເມືອງ ເພື່ອທົບທວນແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ, ສັນຍາສຳປະທານຂອງໂຄງການໄຟຟ້າຫົງສາ, ນະໂຍບາຍທາງດ້ານງົບປະມານ ຂອງໂຄງການ ໂດຍການຈັດກອງປະຊຸມຮ່ວມກັນລະຫວ່າງ ຕົວແທນຂອງຊຸມຊົນ, ໂຄງການ ແລະທາງເມືອງ.
- ປະກອບທີມງານເຮັດວຽກພາກສະໜາມ ເຊິ່ງຕ້ອງເຮັດວຽກປະຈຳຢູ່ກັບຊາວ ບ້ານໃນແຕ່ລະວັນ (ພະນັກງານພັດທະນາຊຸມຊົນ ແລະພະນັກງານ ກະສິກຳປະຈຳບ້ານ ເຊິ່ງລວມມີພະນັກງານຈາກພາກລັດ, ໂຄງການ ແລະອາສາສະໝັກຈາກບ້ານ)

- ຈັດຝຶກອົບຮົມໃຫ້ແກ່ທີມງານດັ່ງກ່າວໄດ້ແກ່: ວິທີການປະເມີນສະຖານະພາບ ຊຸມຊົນແບບມີສ່ວນຮ່ວມ PRA, ວິທີການວິເຄາະຂໍ້ມູນແບບ SWOT, ວິທີການເຂົ້າຫາຊຸມຊົນ ແລະເຮັດວຽກຮ່ວມກັບຊາວບ້ານແບບເຄາະປະຕູບ້ານ, ວິທີການວາງແຜນ ແລະອື່ນໆ
- ລົງປະເມີນສະຖານະພາບຊຸມຊົນແບບມີສ່ວນຮ່ວມ PRA
- ສັງລວມຂໍ້ມູນທີ່ໄດ້ຈາກຂໍ້ມູນມືສອງ ແລະ PRA.
- ນໍາເອົາຂໍ້ມູນທີ່ໄດ້ຈາກ PRA ແລະຂໍ້ມູນມືສອງ ໃຫ້ທີມງານພາກສະໜາມລົງໄປຫາຊາວບ້ານ ໃນເບື້ອງຕົ້ນແມ່ນໄດ້ນໍາສະເໜີຂໍ້ມູນຜ່ານກອງປະຊຸມຂອງບ້ານໂດຍລວມ ແລະ ຫຼັງຈາກນັ້ນກໍ່ໄດ້ທໍາການແບ່ງກຸ່ມຍິງ-ຊາຍເພື່ອສໍາພາດຄື: ກຸ່ມຜູ້ນໍາຊຸມຊົນ, ກຸ່ມທີ່ມີຖານະຮັ່ງມີ, ກຸ່ມທີ່ມີຖານະປານກາງ, ກຸ່ມຜູ້ທີ່ທຸກຍາກ ແລະກຸ່ມຄົນທີ່ດ້ອຍໂອກາດ ເຊັ່ນ: ແມ່ຮ້າງນາງໝ້າຍ, ຄົນສະລາ, ຄົນເສຍ ອົງຄະ.
- ຈັດລຽງບູລິມະສິດຂໍ້ມູນທີ່ໄດ້ຈາກແຕ່ລະກຸ່ມ ແລະວິເຄາະຂໍ້ມູນຮ່ວມກັບກຸ່ມແບບ SWOT
- ກໍາໜົດແຜນຄວາມຕ້ອງການຂອງແຕ່ລະກຸ່ມໂດຍລວມ
- ນໍາເອົາແຜນຂອງກຸ່ມມອບໃຫ້ພະນັກງານປະຈໍາພາກສະໜາມ ເຂົ້າໄປປຶກສາຫາລືກັບຊາວບ້ານໃນຮູບແບບເຄາະປະຕູບ້ານ, ໃນຂັ້ນຕອນນີ້ແມ່ນຕ້ອງໄດ້ໃຊ້ເວລາພໍສົມຄວນ ພະນັກງານພາກສະໜາມຕ້ອງໄດ້ເຂົ້າໄປຝັງຕົວຢູ່ກັບຊຸມຊົນ, ການວາງຕົວຕ້ອງໃຫ້ແບບເປັນກັນເອງສຸພາບຮຽບຮ້ອຍ, ການໃຊ້ພາສາຕ້ອງເນັ້ນໃສ່ພາສາທ້ອງຖິ່ນ, ແຕ່ລະວັນຕ້ອງໄດ້ໄປພົບປະກັບຊາວບ້ານດ້ວຍຮູບການໄປທັກທາຍສະບາຍດີ ນັ່ງໂອ້ລົມຖາມທຸກສຸກ ໂດຍພະຍາຍາມເຮັດໃຫ້ຊາວບ້ານໄດ້ມີຄວາມເຂົ້າໃຈວ່າຄືເປັນຄົນພາຍໃນຄອບຄົວດຽວກັນກັບເຂົາເຈົ້າ.
- ຫຼັງຈາກນັ້ນກໍ່ຄ່ອຍຊັກຖາມເຖິງຄວາມເຂົ້າໃຈກ່ຽວກັບແຜນທີ່ກຸ່ມຂອງເຂົາເຈົ້າໄດ້ນໍາສະເໜີໄປກ່ອນໜ້ານີ້ ວ່າມັນເປັນຄວາມຕ້ອງການຂອງຄອບຄົວເຂົາເຈົ້າແທ້ບໍ່ ແລະຫຼັງຈາກນັ້ນກໍ່ຄ່ອຍນໍາພາເຂົາເຈົ້າວິເຄາະແຜນຄວາມຕ້ອງການ ໂດຍເນັ້ນໃຫ້ເຫັນວ່າ ຖ້າເຮັດກິດຈະກໍາດັ່ງກ່າວຈະມີຜົນດີແນວໃດຕໍ່ຄອບຄົວ? ມັນມີຂໍ້ຈໍາກັດແນວໃດ? ໂອກາດທີ່ເຫັນວ່າມີຄວາມເປັນໄປໄດ້ຄືແນວໃດ? ແລະຄວາມສ່ຽງຕ່າງໆມີຄືແນວໃດ? ທີມງານຕ້ອງໄດ້ນໍາໃຊ້ວິທີການທີ່ໃຫ້ເຂົາເຈົ້າເຂົ້າໃຈງ່າຍໆຄືມີການຍົກຕົວຢ່າງສົມທຽບຫຼາຍໆ, ໃຊ້ຮູບພາບປະກອບຖ້າເຫັນວ່າຈໍາເປັນ.
- ເກັບກໍາຂໍ້ມູນແວດລ້ອມຄົວເຮືອນດັ່ງກ່າວ (ຊັກຖາມເພື່ອນບ້ານ, ອົງການຈັດຕັ້ງບ້ານ ແລະອື່ນໆ) ເພື່ອເປັນການຢັ້ງຢືນວ່າ ຄອບຄົວດັ່ງກ່າວມີຄວາມຈິງໃຈທີ່ຈະດໍາເນີນກິດຈະກໍາດັ່ງກ່າວ, ແຕ່ວິທີການເກັບຂໍ້ມູນແມ່ນພະຍາຍາມບໍ່ເຮັດໃຫ້ເປັນທາງການ ພຽງແຕ່ເປັນການເປີດປະເດັນໃນເລື່ອງກິດຈະກໍາ ແລະພະຍາຍາມກ່າວເຖິງຄອບຄົວທີ່ກ່ຽວຂ້ອງໃຫ້ຫຼາຍໆ.
- ກັບເອົາຂໍ້ມູນຄວາມຕ້ອງການລົງໄປສົມທົບກັບຄອບຄົວດັ່ງກ່າວ ເພື່ອເປັນການຢືນຢັນຄວາມພ້ອມຂອງຄອບຄົວ ແລະຮ່ວມກັນວາງແຜນຈັດຕັ້ງປະຕິບັດ.
- ຕິດຕາມ ແລະໃຫ້ຄໍາແນະນໍາ ໂດຍເນັ້ນໃສ່ວິທີການອົບຮົມກັບທີ່



*ພະນັກງານຫ້ອງການທີ່ດິນລົງສຳຫຼວດດິນ ຮ່ວມກັບຊາວບ້ານ*



*ພະນັກງານຈາກເມືອງ ແລະ ໂຄງການລົງຝຶກອົບຮົມ ໃຫ້ແກ່ກຸ່ມຊາວບ້ານ*

## III. ບົດຮຽນ

### 3.1. ສິ່ງທີ່ເປັນຈຸດດີຂອງວິທີການທີ່ໄດ້ນຳໃຊ້.

- ຊາວບ້ານມີສ່ວນຮ່ວມໃນທຸກຂັ້ນຕອນ
- ໄດ້ຂໍ້ມູນຄອບຄົວທີ່ຂ້ອນຂ້າງ ສົມບູນ ແລະການວາງແຜນດຳເນີນກິດຈະກຳຖືກຕ້ອງຕາມຄວາມຕ້ອງການຂອງຊາວບ້ານ
- ຊາວບ້ານເປັນເຈົ້າຂອງກິດຈະກຳ ຮູ້ວາງແຜນ, ຮູ້ວິທີເຂົ້າຫາແຫຼ່ງທຶນ (ລະບົບສິນເຊື່ອ ຫຼືກອງທຶນພັດທະນາຕ່າງໆ), ກິດຈະກຳການສ້າງລາຍຮັບທັງໝົດທີ່ໄດ້ຈັດຕັ້ງປະຕິບັດແມ່ນແທດເໝາະກັບຄວາມຕ້ອງການຂອງຕະຫຼາດ.
- ຊາວບ້ານສືບຕໍ່ດຳເນີນການຈັດຕັ້ງປະຕິບັດດ້ວຍຕົວເຂົາເຈົ້າເອງ ໂດຍບໍ່ຕ້ອງລໍຖ້າ ພະນັກງານຈາກໂຄງການ ແລະຈາກເມືອງ.

### 3.2. ຂໍ້ຈຳກັດຂອງວິທີການທີ່ໄດ້ນຳໃຊ້.

- ໃຊ້ເວລາຫຼາຍ ຕ້ອງໄດ້ລົງໄປເຮັດວຽກກັບຊາວບ້ານຫຼາຍຫຼົບຫຼາຍຕ່າວ.
- ຂໍ້ມູນຄວາມຕ້ອງການບາງຢ່າງອາດບໍ່ກົງກັບ ແຜນແມ່ບົດຂອງໂຄງການ ຫຼືແຜນພັດທະນາເສດຖະກິດສັງຄົມໄດ້ກຳໜົດໄວ້.
- ຕ້ອງໄດ້ໃຊ້ງົບປະມານຫຼາຍຂຶ້ນໃນການຝຶກຝົນທາງດ້ານທັກສະ ກ່ຽວກັບວິທີການ ເຮັດວຽກກັບຊຸມຊົນ ແລະວິທີການເຂົ້າຫາ ຊາວບ້ານໃຫ້ແກ່ບຸກຄະລາກອນ.
- ການກຳໜົດແຜນອາດມີຄວາມຫຼ້າຊ້າ ເພາະຕ້ອງເບິ່ງຄວາມພ້ອມຂອງຄອບຄົວໄປນຳ
- ວິທີການນີ້ອາດບໍ່ເໝາະສົມທີ່ຈະນຳໃຊ້ເຂົ້າໃນການວາງແຜນກິດຈະກຳໃຫຍ່ໆເຊັ່ນວຽກງານໂຄງລ່າງພື້ນຖານເຊັ່ນ: ໂຄງການກໍ່ສ້າງເສັ້ນທາງ, ນ້ຳລິນ, ໂຮງຮຽນ ແລະອື່ນໆ

3.3. **ປັດໃຈທີ່ສຳຄັນ ເພື່ອນຳໃຊ້ວິທີການດັ່ງກ່າວໃຫ້ໄດ້ຮັບຜົນດີ.**

- ຕ້ອງມີຍຸດທະສາດໃນການພັດທະນາທີ່ຊັດເຈນເຊັ່ນ: ແຜນພັດທະນາເສດຖະກິດສັງຄົມຂອງເມືອງ, ຂອງແຂວງ ແລະລວມທັງນະໂຍບາຍ ຫຼືຍຸດທະສາດໃນການເຂົ້າຫາແຫຼ່ງທຶນ ເຊັ່ນ: ກອງທຶນໝູນວຽນຂອງບ້ານ, ທະນາຄານສິນເຊື່ອຕ່າງໆ.
- ມີພະນັກງານພັດທະນາຊຸມຊົນ ແລະພະນັກງານສົ່ງເສີມກະສິກຳ ປະຈຳຢູ່ພາກສະໜາມຢ່າງໜ້ອຍບ້ານລະ 2 ຄົນ.
- ເນັ້ນໃສ່ການສ້າງອາສາສະໝັກ ຫຼືວິຊາການຢູ່ພາຍໃນບ້ານ.
- ພະນັກງານພາກສະໜາມ ຕ້ອງມີປະສົບການໃນການເຮັດວຽກກັບຊຸມຊົນຫຼາຍພໍສົມຄວນ ເປັນຕົ້ນແມ່ນ:
    - o ທັກສະໃນການເກັບຂໍ້ມູນແບບມີສ່ວນຮ່ວມ PRA, ການວິເຄາະຂໍ້ມູນໃນຮູບແບບຕ່າງໆ.
    - o ການມີມະນຸດສຳພັນທີ່ດີ.
    - o ການປະຊາສຳພັນ ແລະການໃຫ້ຂໍ້ມູນຂ່າວສານຕ່າງໆ.
    - o ກຳໄດ້ແນວທາງນະໂຍບາຍ (ຂອງເມືອງ, ແຂວງ, ໂຄງການ…)
    - o ການເປັນຜູ້ຮັບຟັງຫຼາຍກວ່າການເປັນຜູ້ໃຫ້ຄຳແນະນຳ.
    - o ເປັນຄົນທີ່ມີພົກໄຫວດີ ມີເຫດມີຜົນ ບົນຫຼັກການຂອງການພັດທະນາ.
    - o ຕ້ອງເປັນຄົນທີ່ມັກຮຽນຮູ້ຈາກປະສົບການຂອງຊາວບ້ານ ແລະຍອມຮັບພູມປັນຍາຂອງຊາວບ້ານ ບໍ່ແມ່ນຈະໄປສອນຊາວບ້ານ.
    - o ດີທີ່ສຸດຖ້າເປັນຄົນທີ່ສາມາດເວົ້າພາສາຂອງທ້ອງຖິ່ນໄດ້ ຫຼືເປັນຄົນພາຍໃນທ້ອງຖິ່ນຍິ່ງຈະເປັນການດີ.

ອີກດ້ານໜຶ່ງຜົນສຳເລັດໃນການລົງຈັດຕັ້ງປະຕິບັດຕົວຈິງຢູ່ໃນພາກສະໜາມຂອງທີມງານ ແມ່ນເນື່ອງມາຈາກມີ:

1) ແນວທາງນະໂຍບາຍໃນການພັດທະນາ ຂອງເມືອງ ແລະ ແຂວງ ລວມທັງ ຮ່າງນະໂຍບາຍທີ່ຢູ່ໃນສັນຍາສຳປະທານ ຂອງໂຄງການໄຟຟ້າຫົງສາ.
2) ການເປັນເຈົ້າການຂອງອົງການຈັດຕັ້ງທຸກຂັ້ນຄື: ອຳນາດການປົກຄອງໃນ 5 ບ້ານ, ພະນັກງານຈາກຫ້ອງການທີ່ກ່ຽວຂ້ອງຂອງເມືອງຫົງສາ ແລະແຂວງໄຊຍະບູລີ ລວມທັງພະນັກງານຂອງໂຄງການໄຟຟ້າຫົງສາ ແລະພາກສ່ວນເອກະຊົນອື່ນໆ.
3) ການມີສ່ວນຮ່ວມຂອງຊາວບ້ານທັງ 5 ບ້ານ.
4) ຄວາມພ້ອມຂອງຊາວບ້ານເຊັ່ນ: ດ້ານແຮງງານ, ສະຖານທີ່ ແລະ ແຫຼ່ງສະໜອງວັດຖຸດິບທີ່ໃຊ້ເຂົ້າໃນການດຳເນີນກິດຈະກຳ.
5) ມີແນວໂນ້ມທີ່ດີໃນການກະຕຸ້ນໃຫ້ຊາວບ້ານເກີດມີຄວາມຕ້ອງການເຮັດກິດຈະກຳຕ່າງໆເຊັ່ນ: ພື້ນຖານໂຄງລ່າງ, ຄວາມຕ້ອງການຂອງຕະຫຼາດ ແລະ ອື່ນໆ.

6) ການສະໜັບສະໜູນທາງດ້ານວິຊາການ, ງົບປະມານໃນການຈັດຕັ້ງປະຕິບັດ ຈາກໂຄງການ ແລະ ຈາກຫ້ອງການທີ່ກ່ຽວຂ້ອງຂອງເມືອງ ແລະ ແຂວງ.

## IV. ສິ່ງທີ່ຄວນປັບປຸງ ແລະຕ້ອງໄດ້ຮຽນຮູ້ເພີ່ມເຕີມ

ໃນການລົງເຮັດວຽກຕົວຈິງຂອງທີມງານຢູ່ໃນໝູ່ບ້ານ ຍັງມີຂໍ້ຈໍາກັດຫຼາຍຢ່າງທີ່ຕ້ອງໄດ້ມີການປັບປຸງໃຫ້ດີຂຶ້ນ ເຊິ່ງຈໍາເປັນຕ້ອງໄດ້ອາໃສການຮ່ວມມືຈາກຫຼາຍຝ່າຍຄື: ຊາວບ້ານ, ຕົວແທນຈາກພາກລັດ ແລະ ພາກເອກະຊົນຕ່າງໆ ເພື່ອເຮັດໃຫ້ກິດຈະກໍາທັງໝົດທີ່ໄດ້ຈັດຕັ້ງປະຕິບັດຢູ່ ໃນບ້ານໃຫ້ມີຄວາມຍືນຍົງ, ທາງໂຄງການ ແລະ ທາງເມືອງຕ້ອງໄດ້ເນັ້ນໃສ່ ການພັດທະນາທາງດ້ານ ຊັບພະຍາກອນມະນຸດ ໂດຍສະເພາະແມ່ນຄົນໃນທ້ອງຖິ່ນ, ການສົ່ງເສີມກິດຈະກໍາທາງດ້ານກະສິກໍາ ແລະ ກິດຈະກໍາສ້າງລາຍຮັບອື່ນໆຕ້ອງໃຫ້ຕິດພັນກັບທາງດ້ານການຕະຫຼາດ, ອີກດ້ານໜຶ່ງການທີ່ຈະໃຫ້ ຊາວບ້ານເຂົ້າມາມີສ່ວນຮ່ວມ ແລະ ໃຫ້ຂໍ້ມູນທີ່ຊັດເຈນນັ້ນ ທີມງານພາກສະໜາມຕ້ອງໄດ້ເອົາໃຈໃສ່ ຮຽນຮູ້ວິຖີຊີວິດຂອງຊາວບ້ານ, ເປັນນັກສັງເກດການທີ່ດີ ແລະມີທັກສະໃນການວິເຄາະຂໍ້ມູນ ຢູ່ໃນແຕ່ລະສະຖານະການ ແລະຍັງຈະຕ້ອງເປັນນັກບໍລິຫານຈັດການທີ່ດີອີກດ້ວຍ.